ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ.....1024........./ຍທຂ.

ນະຄອນຫຼວງວຽງຈັນ, ວັນທີ..3..ຕ.ລ.1.2019

## ໜັງສືແຈ້ງຕອບ

ຮຽນ: ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື.

ເລື່ອງ: ຕອບຄຳສະເໜີຂອງປະຊາຊົນ ຜ່ານທາງໂທລະສັບສາຍດ່ວນ 1516 ຂອງລັດຖະບານ.

- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 506/ຫສນຍ, ລົງວັນທີ 17/09/2019.
- ອີງຕາມ ໜັງສືລາຍງານ ຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ສະບັບເລກທີ 555/ຍທຂ.ລຈ, ລົງວັນທີ 24/09/2019.

ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດລາຍງານມາຍັງທ່ານຊາບ: ກ່ຽວກັບຄຳສະເໜີຂອງປະຊາຊົນ ບ້ານນ້ຳພິດ ເມືອງກາສີ ແຂວງວຽງຈັນ ຜ່ານທາງໂທລະສັບສາຍດ່ວນ 1516 ຂອງລັດຖະບານ: ສະເໜີໃຫ້ລັດຖະບານ ແກ້ໄຂການຊົດເຊີຍປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນ. ຕໍ່ກັບບັນຫາດັ່ງກ່າວນັ້ນ, ກະຊວງ ຍທຂ ໄດ້ມອບໃຫ້ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໄປປະສານສົມທົບກັບຄະນະໄກ່ເກ່ຍ ຂອງ ແຂວງວຽງຈັນ ແລະ ໄດ້ກວດກາຄືນສະພາບຕົວຈິງແລ້ວ, ເຫັນວ່າ: ຜ່ານມາຄະນະກຳມະການໄກ່ເກ່ຍຂອງແຂວງ ວຽງຈັນ ໄດ້ສົມທົບກັບອຳນາດການປົກຄອງ ບ້ານນ້ຳພິດ, ເມືອງກາສີ ເພື່ອເກັບກຳຂໍ້ມູນ, ເຮັດບົດບັນທຶກ ແລະ ຢັ້ງຢືນ ຂໍ້ມູນຜົນກະທົບທີ່ຕ້ອງມີ 7 ລາຍເຊັນ ໃນການຢັ້ງຢືນກັບຄອບຄົວຜູ້ຖືກຜົນກະທົບສຳເລັດແລ້ວ 25 ຄອບຄົວ ຂອງຈຳ ນວນຜູ້ຖືກຜົນກະທົບທັງໝົດຂອງບ້ານນ້ຳພິດ ລວມມູນຄ່າຊົດເຊີຍ 1.079.977.000 ກີບ ເຊິ່ງມູນຄ່າຊົດເຊີຍດັ່ງກ່າວ ແມ່ນໄດ້ນອນຢູ່ໃນແຜນສະເໜີຂໍອະນຸມັດງົບປະມານ ເພື່ອເບີກຈ່າຍຄ່າຊົດເຊີຍໃຫ້ແກ່ຜູ້ຖືກຜົນກະທົບ ງວດທີ 6 ຂອງ ບັນດາແຂວງ ແລະນະຄອນຫຼວງວຽງຈັນ ລວມມູນຄ່າ ປະມານ 106 ຕື້ກວ່າກີບ (ສະເພາະແຂວງວຽງຈັນ ລວມມູນຄ່າ 19,6 ຕື້ກີບ). ປະຈຸບັນ ຄະນະຮັບຜິດຊອບພວມດຳເນີນການຂໍອະນຸມັດເບີກຈ່າຍງົບປະມານດັ່ງກ່າວນຳກະຊວງການ ເງິນ ແລະ ບໍລິສັດລົດໄຟລາວຈີນ ຕາມລະບຽບການ, ເຊິ່ງຄາດວ່າ ຈະໄດ້ຮັບການອະນຸມັດ ແລະ ສາມາດໂອນໃຫ້ບັນດາ ແຂວງ ແລະ ນະຄອນຫຼວງວຽງຈັນ ໃນເດືອນ ຕຸລາ 2019 ນີ້ ເພື່ອເບີກຈ່າຍໃຫ້ຜູ້ໄດ້ຮັບຜົນກະທົບຕໍ່ໄປ. ສ່ວນມູນຄ່າ ການເບີກຈ່າຍຄ່າຊົດເຊີຍສິ່ງກີດຂວາງໃນໄລຍະຜ່ານມາໃຫ້ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ແມ່ນມີໃນບົດ ລາຍງານຂອງກະຊວງ ຍທຂ ຫາທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 941/ຍທຂ, ລົງວັນທີ 12/9/2019 (ຄັດຕິດ ມາພ້ອມນີ້).

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ລັດຖະມົນຕີ

ສັນຕິສຸກ ສິມມາລາວົງ

Scanned by CamScanner